# ສຳເລັດກອງປະຊຸມສະມາຄົມທະນາຄານອາຊຽນປະຈຳປີຄັ້ງທີ 41






ໃນຕອນທ່ຽງຂອງວັນທີ 18 ພະຈິກ ຜ່ານມາ ທີ່ໂຮງແຮມລາວພລາຊາ ນະຄອນຫຼວງວຽງຈັນ ໄດ້ສຳເລັດກອງປະຊຸມສະມາຄົມທະນາຄານອາຊຽນປະຈຳປີຄັ້ງທີ 41 ໂດຍແມ່ນ ສປປ ລາວ ເປັນເຈົ້າພາບ ເຊິ່ງໄດ້ດຳເນີນມາເປັນເວລາສອງວັນ ໂດຍການເປັນປະທານຂອງທ່ານ ສົມພາວ ໄຟສິດ ຜູ້ວ່າການທະນາຄານແຫ່ງ ສປປ ລາວ, ພ້ອມນີ້ກໍມີທ່ານ ດຣ ຟາມຣຸຍຣຸງ ປະທານສະມາຄົມທະນາຄານອາຊຽນ, ບັນດາທູດ-ບັນດາປະທານສະມາຄົມຂອງປະຊາຊາດອາຊີຕາເວັນອອກສ່ຽງໃຕ້ ແລະ ທ່ານຮອງເຈົ້າຄອງນະຄອນຫຼວງວຽງຈັນກໍໄດ້ເຂົ້າຮ່ວມ ເຊິ່ງມີທັງໝົດ 250 ຄົນ.

ໃນກອງປະຊຸມສະມາຄົມທະນາຄານອາຊຽນປະຈຳປີຄັ້ງທີ 41, ທ່ານ ສົມພາວ ໄຟສິດ ກໍໄດ້ໃຫ້ກຽດມີຄຳເຫັນໂດຍທ່ານໄດ້ກ່າວວ່າ: ກອງປະຊຸມໃນຄັ້ງນີ້ເປັນເວທີແລກປ່ຽນຄວາມຄິດເຫັນໃນການເສີມຂະຫຍາຍການຮ່ວມມືໃນຂົງເຂດທະນາຄານທຸລະກິດໃຫ້ເຂົ້າສູ່ລວງເລິກ ໃນສະພາບແວດລ້ອມທີ່ພວກເຮົາພວມດຳເນີນບາດກ້າວໃນການເຊື່ອມໂຍງປະຊາຄົມເສດຖະກິດອາຊຽນໃນປີ 2015 ແລະ ໃນທ່າມກາງທີ່ພວກເຮົາກຳລັງດຳເນີນຄວາມພະຍາຍາມໃນການຈັດຕັ້ງປະຕິບັດວິໄສທັດຂອງຜູ້ນຳຂັ້ນສູງຂອງອາຊຽນ ໃນການສ້າງສະມາຄົມເສດຖະກິດອາຊຽນໃນປີ 2015 ນີ້ ແມ່ນການເຊື່ອມໂຍງຂະແໜງການເງິນ-ເງິນຕາອາຊຽນກໍເປັນວຽກງານໜຶ່ງທີ່ມີຄວາມສຳຄັນຫຼາຍໃນການສ້າງສະມາຄົມເສດຖະກິດອາຊຽນໃຫ້ປະກົດຜົນເປັນຈິງຕາມຄາດໝາຍທີ່ວາງໄວ້ ປະຈຸບັນບັນດາປະເທດອາຊຽນກໍກຳລັງມີການຄົ້ນຄວ້າແຜນການເຊື່ອມໂຍງຂະແໜງການເງິນ-ເງິນຕາອາຊຽນ.

ໃນຕະຫຼອດສອງວັນແຫ່ງການດຳເນີນກອງປະຊຸມສະມາຄົມອາຊຽນປະຈຳປີຄັ້ງທີ 41 ຍັງໄດ້ມີການທົບທວນຄືນຜົນຂອງການຈັດຕັ້ງປະຕິບັດກອງປະຊຸມຄັ້ງທີ 40 ຜ່ານມາ, ພ້ອມນີ້ກໍໄດ້ມີການປຶກສາຫາລື, ມີການປະກອບຄວາມຄິດ-ຄວາມເຫັນອັນສຳຄັນໃນກອບການພົວພັນ - ຮ່ວມມືດ້ານການທະນາຄານຂອງອາຊຽນຢ່າງກວ້າງຂວາງ ແລະ ເລິກເຊິ່ງ ໂດຍສະເພາະແມ່ນໄດ້ມີການສະເໜີຄວາມຄິດເຫັນເຂົ້າໃສ່ບົດບັນທຶກຂອງກອງປະຊຸມ 3 ຄະນະກຳມະການທີ່ໄດ້ປະຊຸມໂດຍມີຄະນະກຳມະການຮ່ວມມືໃນດ້ານການຄ້າ ແລະ ການລົງທຶນ, ຄະນະກຳມະການພັດທະນາການສຶກສາດ້ານທະນາຄານ ແລະ ຄະນະກຳມະການພົວພັນສາກົນ ແລະ ກໍໄດ້ມີການຮັບຮອງເອົາມະຕິຂອງກອງປະຊຸມສະມາຄົມທະນາຄານອາຊຽນ ເພື່ອນຳໄປຈັດຕັ້ງປະຕິບັດໃນປີ 2012.